ສິດແລະໜ້າທີ່ຂອງປະຊາຊົນລາວໃນການສ້າງ
ຄວາມສາມະຄີ ເພື່ອ ອະນາຄົດຂອງຊາດ

# ນະໂຍບາຍຕໍ່ສູ້ສ້າງຄວາມສາມະຄີ
# ເພື່ອໃຫ້ມີການຫັນປ່ຽນ
# ການປົກຄອງໃນລາວ
## ຕາມຫລັກປະຊາທິປະໄຕ

ໂດຍ


**ສັນ ສີ ອີ ຫີ**


ແບບ "ບົວບ່ໃຫ້ຊ້ຳນ້ຳບ່ໃຫ້ຂຸ່ນ"


**UNION NATIONALE POUR LA DEMOCRATIE LAO**
**LAO NATIONAL UNION FOR DEMOCRACY**

**PHANNOUDEJ Cham**
Cité de la Joie
20, Allée des Bosquets
94420 LE PLESSIS TRÉVISE

08 Fev. 2004

## ການຕໍ່ສູ້ສ້າງຄວາມສາມັກຄີ ເພື່ອຮ່ວມກັນປະຕິຮູບຫັນປ່ຽນທິດທາງການປົກຄອງລາວ ໂດຍສັນຕິວິທີເພື່ອໄຊຊະນະຂອງປະຊາຊົນລາວ

### ໂດຍ "ລາວຮ່ວມຊາດ ເພື່ອ ປະຊາທິປະໄຕ"

"***ລາວຮ່ວມຊາດ ເພື່ອ ປະຊາທິປະໄຕ***" ຄຳຫຍໍ້ວ່າ ລ.ຮ.ປ.ຫລື "ລາວຮ່ວມຊາດ" ພາສາຝຣັ່ງ : **U.N.D.L.** (Union Nationale pour la Démocratie Lao ) ຫລື **L.N.U.D** (Lao National Union for Democracy). ເປັນອົງການ ການເມືອງທີ່ໄດ້ຖືກຈັດຕັ້ງຂື້ນເພື່ອຕອບສນອງຄວາມຮຽກຮ້ອງຕ້ອງການຂອງປວງຊົນຊາວລາວຜູ້ຮັກຊາດແລະຮັກຄວາມເປັນລາວຢູ່ພາຍໃນປະເທດ ທີ່ທຳການຕໍ່ສູ້ເພື່ອຍາດແຍ່ງເອົາຄວາມເປັນເອກຣາດຂອງຊາດແລະສິດເສຣີພາບມາໃຫ້ປະຊາຊົນໄດ້ຊົມໃຊ້ຢ່າງແທ້ຈິງ,ມີນະໂຍບາຍຕໍ່ສູ້ໂດຍສັນຕິວິທີ ແບບ "ບົວບໍ່ໃຫ້ຊ້ຳນ້ຳບໍ່ໃຫ້ຂຸ່ນ" ຫລື ແບບ "ມີເຫດແລະມີຜົນ" ຕາມຫລັກເສຣີປະຊາທິປະໄຕ ເພື່ອນຳເອົາອຳນາດອະທິປະໄຕມາມອບໃຫ້ເປັນຂອງປະຊາຊົນລາວ ໂດຍປະຊາຊົນແລະເພື່ອປະຊາຊົນລາວ,ໃຫ້ລາວປົກຄອງໃນຣະບອບເສຣີປະຊາທິປະໄຕ ຊຶ່ງເປັນນະໂຍບາຍທີ່ສອດຄ່ອງກັບກົດບັດສະຫະປະຊາຊາດ, ສິດທິມະນຸດແລະກົດຫມາຍສາກົນ,ເພາະໃນສັດຕະວັດທີ 21ນີ້ ບັນດາປະເທດມະຫາອຳນາດແລະສາກົນໄດ້ພ້ອມພາກັນສ້າງເງື່ອນໄຂເຮັດໃຫ້ໂລກມີສັນຕິສຸກເກີດຂື້ນຢ່າງແທ້ຈິງ; ດັ່ງນັ້ນການຕໍ່ສູ້ແບບເອົາແພ້ເອົາຊະນະໂດຍບໍ່ມີເຫດບໍ່ມີຜົນ ແບບແຂ່ງກະດ້າງໃນທຳນອງວ່າ "***ມີເຈັ້ນແລ້ວບໍ່ມີຂ້ອຍ***" ນັ້ນເປັນແນວທາງທີ່ບໍ່ຖືກຕ້ອງແລະບໍ່ສາມາດຈະນຳພາພວກເຮົາກ້າວເດີນໄປສູ່ຄວາມສາມະຄີປອງດອງກັນໄດ້.

ສະນັ້ນພວກເຮົາທີ່ຕໍ່ສູ້ເພື່ອຍາດແຍ່ງເອົາສິດເສຣີພາບແລະສິດພື້ນຖານຂອງມະນຸດ ຢ່າງບໍ່ລົດລະ ມາໃຫ້ປະຊາຊົນລາວໄດ້ຊົມໃຊ້ນັ້ນ,ຈຶ່ງໄດ້ປະຕິບັດແນວທາງໂດຍສັນຕິວິທີແບບ "ບົວບໍ່ໃຫ້ຊ້ຳນ້ຳບໍ່ໃຫ້ຂຸ່ນ" ຊຶ່ງຖືເອົາຄວາມສາມັກຄີຂອງປວງຊົນຊາວລາວເປັນໃຫຍ່,ຍົກສູງເທີດທູນຊາດລາວແລະຍຶດໝັ້ນໃນອຸດົມການຊາດ ໂດຍມີຄຳຂວັນດັ່ງນີ້ : "**ລາວເປັນລາວ - ປະເທດຊາດເອກຣາດເຂັ້ມແຂງ - ປະຊາຊົນສາມະຄີ ມີຄວາມສຸຂ ທຸກຄົນມີເສຣີ - ຍຸຕິທັມໃນສັງຄົມ**".

ກ່ອນຈະກ້າວເຂົ້າໄປຫາເປົ້າຫມາຍ ນະໂຍບາຍ ແນວທາງ ໃນການສ້າງຄວາມສາມັກຄີປອງດອງກັນນັ້ນ ພວກເຮົາຕ້ອງຮູ້ຈັກວ່າ ***ຊາດແມ່ນຫຍັງ ?*** ຖ້າເຮົາບໍ່ເຂົ້າໃຈຢ່າງເລິກເຊິ່ງໃນຄວາມວ່າຊາດແລະອົງປະກອບສ່ວນຂອງ

ຄວາມເປັນຊາດແລ້ວ,ພວກເຮົາຈະບໍ່ຈຳແນກໄດ້ວ່າ ອັນໃດຜິດອັນໃດຖືກ ໃຜເປັນມິດ ໃຜເປັນສັດຕູຂອງຊາດ ? ຊາດລາວ ກໍຄືປະຊາຊົນລາວທຸກຖ້ວນໜ້າ ບໍ່ວ່າຈະຢູ່ແຫ່ງໃດແລະເຜົ່າພັນໃດກໍລ້ວນແລ້ວແຕ່ເປັນຊາດລາວ ປະກອບດ້ວຍຄວາມຮັ່ງມີ ດ້ານສິລປະ ວັທນາທັມຮີດຄອງປະເພນີອັນດີງາມ ມີພາສາແລະໜັງສືຂອງຊາດ ພ້ອມທັງພື້ນແຜ່ນດິນອັນກວ້າງໃຫຍ່ມີ 236 800ກິໂລແມດ ມົນທົນ ມີພົລເມືອງ 5 ລ້ານຄົນພ້ອມດ້ວຍຊັພຍາກອນທັມຊາດອັນອຸດົມສົມບູນ, ທັງໝົດນີ້ແມ່ນສະແດງໃຫ້ຮູ້ວ່າເປັນລັກສນະຊາດລາວເຮົາ,ສະນັ້ນພວກເຮົາຕ້ອງພ້ອມກັນປົກປັກຮັກສາເອົາໄວ້ເໝືອນດັ່ງບັນພະບຸຣຸດຂອງເຮົາໄດ້ປົກປ້ອງຮັກສາສືບທອດມາ,ພວກເຮົາທີ່ເກີດໃໝ່ໄຫຍ່ລຸ້ນ ຊຶ່ງເປັນລູກຮັກຫລານແພງຂອງບັນພະບູຣຸດ,ມີສະຕິຊາດສູງແລະຮັກຄວາມເປັນລາວ, ຄວນແລ້ວຈະຕ້ອງພ້ອມພາກັນປະຕິຮູບພັທນາເສີມສ້າງລາວໃຫ້ເຂົ້າກັບຍຸກສໄມ ,ມາຮ່ວມກັນຕັດຮອນຜ່ອນສັດຕູໝູ່ມານຂອງຊາດ ເພື່ອຮ່ວມເຮັດໃຫ້ລາວເປັນລາວ ບໍ່ຢູ່ໃຕ້ອຳນາດຊາດອື່ນໃດ.

ດ້ວຍເຫດນີ້ ໂດຍອີງຕາມສະພາບການ ດ້ານການເມືອງ ການເສຖກິດແລະສັງຄົມໃນລາວປະຈຸບັນແລະສະຖານະການຂອງ ໂລກ; ພວກເຮົາຈຶ່ງໄດ້ວາງນະໂຍບາຍຂໍ້ກຳນົດການປະຕິບັດງານຕ່າງໆອັນເໝາະສົມເພື່ອຜົນປະໂຍດອັນສູງສົ່ງຂອງຊາດໃຫ້ເກີດຜົນເປັນຈິງ,ດັ່ງນັ້ນນະໂຍບາຍ ແນວທາງຕໍ່ສູ້ອັນຖືກຕ້ອງແລະເປັນທັມເພື່ອຄວາມສາມະຄີແລະອະນາຄົດຂອງຊາດ ໂດຍຫຍໍ້ ມີດັ່ງນີ້ :

## ນະໂຍບາຍ ແນວທາງ ເປົ້າໝາຍ ໃນ ພາກປະຕິບັດ

1 - ຖືເອົາຄວາມຮັກຊາດ ເພື່ອເອກຣາດຂອງຊາດ ,ເສຣີພາບ, ປະຊາທິປະໄຕ ແລະສິດທິມະນຸດເປັນ ເຂັມຊີ້ທິດ ຫລື <u>ອາວຸດໃນການຕໍ່ສູ້ໂດຍສັນຕິວິທີ.</u>

2 - ເສີມສ້າງຂຍາຍພະລັງປະຊາຊົນໃຫ້ເປັນກຳລັງເຜີຍແຜ່ສິດທິມະນຸດແລະບັນດາສິດເສຣີພາບເພື່ອ<u>ຊຸກຍູ້ໃຫ້ມີການປະຕິຮູບຫັນປ່ຽນທິດທາງການປົກຄອງ</u>ທັງນີ້ກໍ່ເພື່ອໃຫ້ລາວຢູ່ໃນແລະຢູ່ນອກປະເທດໄດ້ເຂົ້າຈຸຈອດກັນຢ່າງສເມີພາບໃນຄວາມເປັນລາວເພື່ອປະກອບສ່ວນໃນການຈັດສ້າງຣະບຽບໃໝ່ໃຫ້ເຂົ້າກັບຍຸກສໄມ.

3 - ເຊື່ອໝັ້ນໃນແຜນການຕໍ່ສູ້ໂດຍສັນຕິວິທີ ແບບ "ບົວບໍ່ໃຫ້ຊ້ຳ ນ້ຳບໍ່ໃຫ້ຂຸ່ນ" ກໍ່ຄືແບບ "ມີເຫດແລະມີຜົນ" <u>ເຮັດໃຫ້ລາວເປັນລາວມີເອກຣາດຂອງຊາດບໍ່ຢູ່ໃຕ້ອຳນາດຊາດອື່ນ</u> ,_ເປັນການຕໍ່ສູ້ທີ່ຫລີກລ່ຽງການປະຫັດປະຫານຊີວິດແລະຊັບສິນຂອງຄົນລາວດ້ວຍກັນ,ເພາະຄົນລາວຢູ່ໃນປະເທດບໍ່ໄດ້ເປັນສັດຕູຂອງພວກເຮົາ,

ສັດຕູຂອງລາວແມ່ນຕ່າງດ້າວທີ່ນຳເອົາລະບອບສັກດີນາຜະເດັດການມາຢຶດຄອງແລະຂົ່ມຂູ່ປະຊາຊົນລາວ ໂດຍທາງຕົງແລະທາງອ້ອມ. ດັ່ງນັ້ນພວກເຮົາຈຶ່ງເອົາແຕ່ຄວາມຈິງມາເຜີຍແບເພື່ອຊະນະຄວາມຕົວະຫລອກລວງ. ປະລະຖິ້ມຄວາມຄິດເບື້ອງຫລັງອັນບໍ່ຈົບບໍ່ງາມຊຶ່ງເປັນປໍຣະປັກຕໍ່ກັນ, ແລ້ວຫັນມາ<u>ຢືນຕໍ່ສູ້ດ້ວຍຄວາມບໍຣິສຸດໃຈເພື່ອຊາດແລະເພື່ອປະຊາຊົນລາວ</u>, ບໍ່ແມ່ນເພື່ອກຸ່ມໃດ, ບຸກຄົນໃດຫລືຊາດໃດ, ໂດຍຖືເອົາພລັງທີ່ປະກອບດ້ວຍມວນຊົນລາວທຸກເຜົ່າພັນທີ່ບໍ່ມັກລະບອບສັກດີນາຜະເດັດການເຂົ້າສົມທົບກັບພະລັງປະຊາທິປະໄຕພວກເຮົາທີ່ມີຢູ່ຕາມຫົວເມືອງແລະເຂດຕ່າງໆໃນລາວ, ໂດຍມີສຳນັກງານຢູ່ ນະຄອນວຽງຈັນ ເປັນພື້ນຖານ; ສ່ວນຢູ່ນອກປະເທດນັ້ນເປັນສຳລອງໃນການຊຸກຍູ້.

4 - ຕິດຕໍ່ພົວພັນຮຽກຮ້ອງເອົາການສນັບສນູນຮ່ວມມືຈາກປະເທດເພື່ອນມິດແລະສາກົນເພື່ອໃຫ້ຮັບຮູ້ສນັບສນູນນະໂຍບາຍອັນຖືກຕ້ອງຂອງພວກເຮົາໃນ<u>ການຕໍ່ສູ້ເພື່ອຄວາມເປັນລາວ ໃນການສແວງຫາສັນຕິພາບ ສັນຕິສຸກ ແລະຄວາມສະວັດດີພາບມາສູ່ປະຊາຊົນລາວ.</u>

5 - ຮັບເອົາການຊ່ວຍເຫລືອຈາກປະເທດເພື່ອນມິດແລະສາກົນໃນທຸກຮອບດ້ານໂດຍບໍ່ມີຂໍ້ຜູກມັດໃດໆ <u>ເພື່ອເຮັດໃຫ້ການຕໍ່ສູ້ອັນເປັນທັມໃນການສ້າງຄວາມສະມາຄີປອງດອງຊາດແບບ "ບົວບໍ່ໃຫ້ຊ້ຳນ້ຳບໍ່ໃຫ້ຂຸ່ນ" ໄດ້ຮັບຜົນເກີດເປັນຈິງ.</u>

ດ້ວຍເຫດນີ້ ນະໂຍບາຍຕໍ່ສູ້ໂດຍສັນຕິວິທີແບບ "ບົວບໍ່ໃຫ້ຊ້ຳນ້ຳບໍ່ໃຫ້ຂຸ່ນ" ຂອງ "ລາວຮ່ວມຊາດ" ຈຶ່ງຖືວ່າເປັນແນວທາງຂອງປະຊາຊົນລາວທຸກຖ້ວນຫນ້າທີ່ ບໍ່ມັກລະບອບສັກດີນາຜະເດັດການແລະບໍ່ຢາກໃຫ້ລາວຢູ່ໃຕ້ອຳນາດຕ່າງດ້າວ.

## 2 - ເຫດຜົນທີ່ຢັ້ງຢືນໃຫ້ເຫັນວ່າການຕໍ່ສູ້ໂດຍສັນຕິວິທີ ແບບ "ບົວບໍ່ໃຫ້ຊ້ຳນ້ຳບໍ່ໃຫ້ຂຸ່ນ" ຈະໄດ້ຮັບໄຊຊະນະມາສູ່ປະຊາຊົນລາວ

ການຕໍ່ສູ້ອັນຖືກຕ້ອງແລະເປັນທັມ ຢ່າງບໍລົດລະ ຂອງ "ລາວຮ່ວມຊາດ" ເພື່ອຍາດແຍງເອົາສິດເສຣີພາບ ມາໃຫ້ປະຊາຊົນລາວໄດ້ຊົມໄຊ້ນີ້ ແມ່ນອີງໃສ່ກົດບັດສະຫະປະຊາຊາດ, ປະກາດສາກົນກ່ຽວກັບສິດຂອງມະນຸດ, ບັນດາສິດເສຣີປະຊາທິປະໄຕແລະຫຼັກ "ປັນຈະສີລາ" ໃນການຢູ່ຮ່ວມກັນໂດຍສັນຕິວິທີກັບເພື່ອນບ້ານ, ເພາະປະຊາຊົນລາວຕ້ອງການຄວາມສງົບ ບໍ່ຊອກເປັນສັດຕູໃຜ ການທີ່ລາວບໍ່ຖືກຕ້ອງກັນນັ້ນແມ່ນມາຈາກຕ່າງດ້າວເປັນຜູ້ຍຸແຍ່, ຊາວລາວຢູ່ໃນແລະນອກ

ປະເທດລ້ວນແລ້ວແຕ່ເປັນຜູ້ຮັກຊາດ ຮັກຄວາມເປັນລາວແລະຊອກຫາແຕ່ຄວາມຮັກແພງສາມະຄີກັນ. ສະນັ້ນຕາມຄວາມຈິງແລ້ວ ແຕ່ກ່ອນຍ້ອນຄວາມຮັກຊາດນີ້ມວນຊົນລາວຈຳພວກນຶ່ງທີ່ຮູ້ເທົ່າບໍ່ເຖິງການແລະຢ້ານການນາບຂູ່ ຈຶ່ງໄດ້ເຫັນພ້ອມນຳການໂຄສະນາຂອງພວກຜະເດັດການ, ເພາະຄຶດວ່າເພິ່ນຈະມາສ້າງປະເທດໃຫ້ຈະເຣີນກ່ອນເກົ່າ ບໍ່ມີການສໍ້ຣາດບັງຫຼວງ,ພວກຕົນຈະໄດ້ຢູ່ດີກິນດີມີສິດທຸກຢ່າງຕາມເພິ່ນໄດ້ເວົ້າມາ,ແຕ່ມາບັດນີ້ ເຂົາເຈົ້າໄດ້ຕື່ນຕົວເພາະໄດ້ຖືກຕົວະຫຼອກລວງ,ດັ່ງນັ້ນທາງບອກທຸກຢ່າງກໍກາຍມາເປັນທາງລົບຫມົດເສັ້ງແລ້ວດ້ວຍເຫດແລະຜົນດັ່ງນີ້ :

1 - ການນຳພາຂອງພັກແລະຣັຖທີ່ໄດ້ປະກາດວ່າສລາດສ່ອງໃສນັ້ນ ໄດ້ປົກຄອງປະເທດມາໄດ້ເກືອບ30ປີແລ້ວ ພາໃຫ້ມີຄວາມຫຼ້າຫຼັງ,ປະຊາຊົນທຸກຂຍາກແລະບໍ່ມີຄວາມຫວັງຫຍັງໃນອະນາຄົດ.

2- ຫລັງຈາກບັນດາປະເທດຜະເດັດການຄອມມຸນິດໃນພາກພື້ນຢູຣົບຕາວັນອອກ ພ້ອມທັງສະຫະພາບ ໂຊວຽດຣັດເຊັຍ ໄດ້ພັງທະລາຍລົງແລະໄດ້ຫັນປ່ຽນທິດທາງການປົກຄອງໄປທາງເສຣີແລ້ວ,ວຽດນາມແລະລາວກໍຢູ່ໃນທ່າອ່ອນເພັຍ ແຕ່ກ່ອນຫລາຍຄົນຄຶດວ່າຄອມມຸນິດເຂົ້າບ່ອນໃດແລ້ວ ບໍ່ມີທາງຈະໄປແຕະຕ້ອງແລະໂຄ່ນລົ້ມໄດ້. ດັ່ງນັ້ນການຫັນປ່ຽນຕາວປີ້ນແບບສັນຕິວິທີໃນບັນດາປະເທດຢູຣົບຕາເວັນອອກດັ່ງກ່າວນີ້ ຈຶ່ງມີຄວາມເປັນຈິງຢ່າງປະຈັກຕາມາແລ້ວ.

3 - ຢູ່ໃນຖັນແຖວຂອງພັກເອງສະມາຊິກໄດ້ແຕກແຍກກັນຢ່າງຄໍຂາດບາດຕາຍ ໃນແນວຄິດແລະຜົນປະໂຍດ, ເພາະກ່ອນປີ 1975 ທຸກຄົນໃນພັກໄດ້ນອນດິນກິນຫຍ້າຮ່ວມກັນ "ເຂົ້າເມັດຫັກຜັກໜຶ່ງເສັ້ນກໍປັນກັນກິນ", ມາບັດນີ້ ພວກໜຶ່ງມີເຮືອນວິນລາ 4 - 5 ຫລັງ ມີຣົດງາມຂີ່, ອີກພວກໜຶ່ງບໍ່ມີເຮືອນຢູ່ ບໍ່ມີຣົດຂີ່.ນອກນີ້ພວກທີ່ເອີ້ນວ່າ "ນັກປະຕິວັດ 30 ປີ" ກໍຖືກປັດເຂັ່ຍຫາວ່າໄຊ້ການບໍ່ໄດ້ ໃຫ້ກັບເມືອປູກຝັງກິນ ໂດຍບໍ່ໄດ້ຮັບການເບິ່ງແຍງໃດໆ.ອີກປະການນຶ່ງ ຢູ່ໃນພັກ ຍັງມີພວກທີ່ນິຍົມຈີນ,ພວກນິຍົມວຽດນາມແລະອີກພວກນຶ່ງຢາກໃຫ້ມີການປ່ຽນແປງ, ໃນກອງທັບກໍມີການແບ່ງແຍກເປັນກຸ່ມເພື່ອປ້ອງກັນຜົນປະໂຍດຂອງກຸ່ມໃຜກຸ່ມລາວ ໂດຍບໍ່ຄຶດຫາຄວາມທຸກຍາກຂອງປະຊາຊົນແລະຜົນປະໂຍດຂອງຊາດ.

4 - ກະແສຟອງປະຕິວັດໂລກ ແທນທີ່ຈະປະຫ້ວງຣະບອບເສຣີ ຫຼື ນາຍທຶນຊ້ຳ

ພັດໄປປະຫ້ວງຣະບອບສັກດີນາຜະເດັດການ ເພາະເຂົາເຈົ້າເຫັນວ່າເປັນຣະບອບທີ່ເບື່ອເມົາປະຊາຊົນ , ເຮັດໃຫ້ຄົນເປັນຂ້າທາດແລະທຸກຍາກຕລອດໄປ.

5 - ແຕ່ກ່ອນປະຊາຊົນຜູ້ຮູ້ເທົ່າບໍ່ເຖິງການແລະຢ້ານການນາບຂູ່ຈຶ່ງໄດ້ຍິນດີສນັບສນູນພວກສັກດີນາຜະເດັດການ ເພິ່ນເວົ້າຜິດເຮັດຜິດກໍເປັນຖືກ,ດຽວນີ້ເຂົາເຈົ້າເບື່ອໜ່າຍແລະຄຽດແຄ້ນໃນການຕັດຄວາມເປັນອິສຣະພາບແລະສິດພື້ນຖານໃນການເປັນມະນຸດຈຶ່ງພາໃຫ້ມີການຕື່ນຕົວ ເຂົ້າມາຕິດແທດຮ່ວມກັບພະລັງປະຊາທິປະໄຕພວກເຮົາ ນັບມື້ນັບຫຼາຍຂຶ້ນ.

6 - ບັນດາປະເທດເສຣີແລະສາກົນ ທີ່ໄດ້ຊ່ວຍເຫຼືອລາວດ້ວຍຄວາມເອັນດູດ້ານມະນຸສທັມ ກໍໄດ້ຕັດຮອນການຊ່ວຍເຫຼືອລົງກາຍ 55 % , ເພາະເຂົາເຈົ້າເຫັນວ່າລາວບໍ່ໄດ້ຜລິດຫຍັງ ທີ່ເຮັດໃຫ້ເສຖກິດຂອງຊາດດີຂຶ້ນ ,ນອກຈາກການປູກຝິ່ນ, ຜລິດຢາເສບຕິດແລະເກາະຫ້ອຍກິນບໍາສາກົນ, ມີແຕ່ສເນີໂຄງການຕ່າງໆເພື່ອຂໍເອົາການຊ່ວຍເຫລືອເທົ່ານັ້ນ ແຕ່ບໍ່ໄດ້ເກີດຜົນຕາມທາງຄວນເພາະຂາດການເປີດກວ້າງທາງການເມືອງມີແຕ່ໄຂກວ້າງທາງເສຖກິດເພື່ອຢາກໄດ້ການລົງທືນຈາກປະເທດເສຣີແລະສາກົນ,ດັ່ງນັ້ນຈຶ່ງເຮັດໃຫ້ທະຫານ,ຕໍາຣວດແລະຣັຖການບໍ່ໄດ້ຮັບເງິນເດືອນເປັນປົກກະຕິ,ພາໃຫ້ເຂົາເຈົ້າບໍ່ມີສັດທາຮ່ວມມືນໍາພັກ-ຣັດ ແລະເຮັດໃຫ້ສະພາບການຖອຍຫຼັງລົງ ,ດ້ວຍເຫດນີ້ເຂົາເຈົ້າຈຶ່ງເຂົ້າມາຮ່ວມນໍາກໍາລັງປະຊາທິປະໄຕພວກເຮົາ<u>ເພື່ອທ້າງຫາເຮັດໃຫ້ມີການປ່ຽນແປງການປົກຄອງແບບ "ບົວບໍ່ໃຫ້ຊໍ້າ ນໍ້າບໍ່ໃຫ້ຂຸ່ນ" ໃນເມື່ອໂອກາດເຫມາະສົມອໍານວຍໃຫ້ ໂດຍປາສະຈາກການນອງເລືອດຣະຫວ່າງຄົນລາວດ້ວຍກັນ</u>,ສ່ວນກໍາລັງອາວຸດທີ່ພວກເຮົາມີຢູ່ນັ້ນກໍ່ເພື່ອເອົາໄວ້ຮັກສາຄວາມສະງົບຫລືໃຊ້ໃນເວລາຈໍາເປັນເທົ່ານັ້ນ.

ບັດນີ້ພວກເຮົາເຫັນແຈ້ງນໍາກັນວ່າ<u>ໄຊຊນະຈະຕ້ອງເປັນຂອງປະຊາຊົນລາວ</u>. ໃນເມື່ອໂອກາດທີ່ອໍານວຍໃຫ້ພວກເຮົານີ້ ພວກເຮົາຄວນແລ້ວຈະຕ້ອງສົມທົບກັບມວນຊົນຜູ້ມີອູດົມການຊາດໃຫ້ເປັນພລັງຕໍ່ສູ້ໃຫ້ໄຊຊະນະໄດ້ເກີດເປັນຜົນໄວທີ່ຈະໄວໄດ້. ຖ້າບໍ່ແມ່ນເວລານີ້ ພວກເຮົາຈະລໍຖ້າເວລາໃດ ? ຖ້າບໍ່ແມ່ນພວກເຮົາທີ່ມີຄວາມຮັກຊາດນໍາກັນນີ້ ພວກເຮົາຈະຖ້າໃຫ້ໃຜ ? ບໍ່ມີເທວະດາອົງໃດ ຫລືຊາດໃດຈະມາຊ່ວຍເຮົາ ຖ້າພວກເຮົາບໍ່ເປັນເຮົາເອງເສັຽກ່ອນ,ແຕ່ຖ້າວ່າພວກເຮົາຫາກຮ່ວມກັນຕໍ່ສູ້ດ້ວຍຄວາມສຸດຈະຣິດໃຈເພື່ອຊາດຢ່າງເດັດດ່ຽວແລ້ວ, ເວລານັ້ນຊາດອື່ນຈຶ່ງຈະຍື່ນມືມາຫາພວກເຮົາ,ບັນຫາລາວຕ້ອງແມ່ນລາວເປັນ

ຜູ້ຮ່ວມກັນແກ້ໄຂ, ແຕ່ພວກເຮົາກໍຕ້ອງອາໄສປະເທດເພື່ອນມິດເໝືອນກັນ ເພື່ອເລັ່ງລັດໃຫ້ໄດ້ໄຊຊະນະອັນຮີບດ່ວນມາໃຫ້ປະຊາຊົນລາວກໍຄືການປົດປ່ອຍຄວາມທຸກຍາກອອກຈາກລາວແລະໃຫ້ມີສິດເສຣີພາບອັນແທ້ຈິງ.

## 3 - ເປັນຫຍັງການສ້າງຄວາມສາມັກຄີທີ່ຜ່ານມາບໍ່ໄດ້ຮັບຜົນ

ເພາະວ່າທິດທາງການນຳພາບໍ່ຖືກກັບສະພາບ, ໃນສັດຕະວັດທີ 21ນີ້ ບັນດາປະເທດມະຫາອຳນາດແລະສາກົນໄດ້ພ້ອມກັນສ້າງເງື່ອນໄຂເຮັດໃຫ້ໂລກມີສັນຕິພາບເກີດຂຶ້ນຢ່າງແທ້ຈິງ. ດັ່ງນັ້ນແນວທາງຕໍ່ສູ້ເອົາແພ້ເອົາຊະນະແບບ ເຫັນແກ່ຕົວເພື່ອແກ້ແຄ້ນແບບແຂງກະດ້າງໃນທຳນອງວ່າ "*ນ້ຳຈ້ຳແລ້ວບໍ່ມີຂອຍ*" ເປັນແນວທາງທີ່ບໍ່ຖືກຕ້ອງ ບໍ່ສາມາດຈະນຳພາໄປສູ່ສັນຕິພາບແລະຄວາມສາມັກຄີປອງດອງກັນ. ດ້ວຍເຫດນີ້ການສນັບສນູນອູ້ມຊູຂອງປະຊາຊົນຈຶ່ງລົດນ້ອຍຖອຍລົງ, ມະຫາອຳນາດແລະສາກົນກໍບໍ່ເຫັນພ້ອມເພາະຜິດກັບແນວທາງສ້າງສັນຕິສຸກ. ພວກເຮົາໄດ້ເຫັນກອງປະຊຸມໃຫຍ່ໆມາຫລາຍຄັ້ງແລ້ວ ເພື່ອສ້າງສາມະຄີໃນຮູບທີສດີຄືໂຮມກຸ່ມການຈັດຕັ້ງເຂົ້າເປັນອັນນຶ່ງອັນດຽວກັນແລະຫວັງວ່າຈະໄດ້ຮັບການຊ່ວຍຈາກນາໆຊາດພຽງເທົ່ານັ້ນ ກໍເຫັນວ່າບໍ່ຖືກຕ້ອງ ເພາະບໍ່ມີພື້ນຖານລັກສນະໃນຄວາມເປັນຊາດໃນການຕໍ່ສູ້ເພື່ອປະຊາຊົນ, ເປັນພຽງແຕ່ຮູບການຈັດຕັ້ງສະເພາະເພື່ອຜົນປະໂຍດຂອງພວກຕົນ ດັ່ງນັ້ນຈຶ່ງບໍ່ມີຄວາມສຳເຣັດຕາມຄາດໝາຍ, ບຸກຄົນໃນຄນະກັມການຕັ້ງຂຶ້ນໂດຍເຫັນແກ່ໜ້າກັນ ບໍຄຳນຶງເຖິງຊາດ ດັ່ງນັ້ນຈຶ່ງຂາດການເສັຽສລະໃນການເຮັດວຽກ, ບໍ່ມີຄວາມເປັນເອກພາບພາຍໃນ ຕ່າງຄົນຕ່າງເຮັດໄປຕາມຄວາມເຂົ້າໃຈຂອງໃຜລາວ ຈຶ່ງເຮັດໃຫ້ການຈັດຕັ້ງຮ່ວມກັນອ່ອນເພັຽແລະລົ້ມລະລາຍໃນບັ້ນປາຍ. ດ້ວຍເຫດນີ້ ພວກເຮົາຈຶ່ງຍຶດໝັ້ນໃນການຕໍ່ສູ້ໂດຍສັນຕິວິທີແບບ "ບົວບໍ່ໃຫ້ຊ້ຳນ້ຳບໍ່ໃຫ້ຂຸ່ນ" ຫລືແບບ "ມີເຫດແລະມີຜົນ" ຕາມສະພາບຕົວຈິງ ຕາມຫລັກສາກົນ ໂດຍຖືເອົາຜົນປະໂຍດຂອງຊາດລາວເປັນໃຫຍ່.

## 4 - ຫລັກການ ແນວທາງ ແລະ ກົນໄກການເມືອງ ເພື່ອສ້າງຄວາມຈະເຣີນກ້າວໜ້າ ແລະ ອະນາຄົດຂອງລາວ

ຫຼັງຈາກໄດ້ສຶກສາຄົ້ນຄວ້າເບິ່ງເຫດແລະເບິ່ງຜົນວ່າຈຸດດີແລະຈຸດອ່ອນຂອງການສ້າງຄວາມປອງດອງກັນທີ່ຜ່ານມາແລະສະຖານະການທົ່ວໄປຂອງລາວແລະຂອງສາກົນແລ້ວ, ໄດ້ເຫັນວ່າໃນສະພາບການປະຈຸບັນນີ້ ຕ້ອງເລີ້ມຈາກການ

ປະສານງານສົມທົບໃນວຽກງານຕົວຈິງຮ່ວມກັນ. ສະນັ້ນພວກເຮົາທຸກຝ່າຍແລະພີ່ນ້ອງຜູ້ຮັກຊາດຮັກຄວາມເປັນລາວຢູ່ໃນແລະນອກປະເທດຄວນຫັນໜ້າມາຮ່ວມແນວຄິດແບບອ້ອມ "ໂຕະມົນ" ຢ່າງມີຄວາມສເມີພາບໃນການວາງແຜນປະສານງານຮ່ວມ ໂດຍບໍ່ມີໃຜເສັຍປຽບແລະໄດ້ປຽບ ໃຫ້ແມ່ນປະຊາຊົນລາວຝ່າຍດຽວເປັນຜູ້ໄດ້ປຽບແລະໄດ້ໄຊຊະນະຕາມຫຼັກປະຊາທິປະໄຕ, ສ່ວນວິທີການນັ້ນແມ່ນທຸກຄົນຈະຕ້ອງເຫັນພ້ອມນຳກັນ. "ລາວຮ່ວມຊາດ" ເຫັນວ່າຈຸດໃຫຍ່ຂອງພວກເຮົາທຸກຄົນທີ່ປາຖນາຢາກໄດ້ນຳກັນນີ້ກໍ່ຄື :

**ປະຕິຮູບຫັນປ່ຽນການປົກຄອງລາວໄປທາງເສຣີປະຊາທິປະໄຕ. ມີເອກຣາດຂອງຊາດ ບໍ່ຢູ່ໃຕ້ອຳນາດຕ່າງດ້າວ. ໃຫ້ປະຊາຊົນລາວມີຄວາມຢູ່ດີກິນດີ.**

ຖ້າທຸກຄົນຫາກມີຈຸດອັນດຽວກັນແລ້ວ ເພື່ອຈະໃຫ້ເກີດຜົນໄດ້ແນວນີ້ ພວກເຮົາທຸກຄົນຢູ່ໃນແລະນອກປະເທດຕ້ອງເສັຍສລະ ຄື ຕ້ອງ*ຮັບຮູ້ຄວາມແຕກຕ່າງ* ໂດຍບໍ່ຈຳແນກໃນການເຊື່ອຖື ແລະແນວຄິດການເມືອງ ຫຼີກເວັ້ນແນວຄິດຕາຍຕົວ ແລະການເປັນປໍຣະປັກຄຽດແຄ້ນເຫັນແກ່ຕົວ ແລ້ວມາພ້ອມພຽງກັນຕໍ່ສູ້ ເພື່ອຄວາມເປັນລາວຄວາມສາມະຄີແລະຄວາມຢູ່ດີກິນດີມາສູ່ປະຊາຊົນລາວເທົ່ານັ້ນ.

ຫຼັງຈາກການຮ່ວມປະສານງານໃນການສ້າງຄວາມສາມະຄີປອງດອງກັນແລ້ວ ຈຶ່ງກ້າວເຂົ້າໄປສູ່ການແກ້ໄຂບັນຫາຕ່າງໆຂອງຊາດ ເປັນໄລຍະສັ້ນແລະໄລຍະຍາວ(ທີ່ພວກເຮົາມີໄວ້ຈະເອົາອອກເຜີຍແຜ່ໃນເວລາຄວນ), ຕົວຢ່າງການເລືອກຕັ້ງທົ່ວໄປ ຕ້ອງຮ່ວມກັນສຶກສາ ກວດແກ້ກົດລະບຽບ ການເລືອກຕັ້ງທີ່ມີຢູ່ແລ້ວ ຫຼືລຽບລຽງໃໝ່ໃຫ້ຖືກກັບສະພາບການ, ດ້ານພັທນາເສຖກິດ - ສັງຄົມກໍ່ໃຫ້ກ້າວໜ້າເພື່ອປົດເປື້ອງຄວາມທຸກຍາກ, ການປົກຄອງແລະ ການເມືອງຕ້ອງຮ່ວມກັນປະຕິຮູບໃຫ້ສອດຄ່ອງຕາມຍຸກສໄມ ຢ່າງນິ້ມນວນແບບ "ບົວບໍ່ໃຫ້ຊ້ຳ ນ້ຳບໍ່ໃຫ້ຂຸ່ນ" ແລະປະຕິບັດເປັນຂັ້ນເປັນຕອນໄປຕາມສະພາບການຂອງໂລກ.

ນອກນີ້ ພວກເຮົາໄດ້ເຫັນແລະໄດ້ປະສົບການຜ່ານມາເກືອບສອງສັດຕະວັດແລ້ວ ໃນການປົກຄອງລາວຢ່າງຕໍ່ເນື່ອງຂອງພວກລ່າຫົວເມືອງຂຶ້ນ ຕໍ່ມາກໍ່ແມ່ນຣະບອບຣາຊາ ແລະ ປະຈຸບັນແມ່ນ ຣະບອບຜະເດັດການ "ມາກສ໌-ເລນິນ" ຈຶ່ງເຮັດໃຫ້ປະຊາຊົນມີແນວຄິດໃໝ່ອັນສອດຄ່ອງຕາມຍຸກຕາມສໄມຂອງໂລກ, ດັ່ງນັ້ນຈຶ່ງເຫັນວ່າປະເທດລາວເຮົາຕ້ອງປົກຄອງໃນຣະບອບປະຊາທິປະໄຕແບບເສຣີ ຊຶ່ງເປັນຣະບອບທີ່ເໝາະສົມແກ່ລາວ, ສ່ວນຣະບອບສັກດີນາຜະເດັດການນັ້ນຈະເປັນ

ຮູບໃດກໍເປັນຣະບອບທີ່ຫ່ວງດຶງຄວາມຈະເຣີນກ້າວໜ້າ,ເພາະການນຳພາປະເທດປູ່ເໜືອປະຊາຊົນ ເຂົາເຈົ້າບໍ່ໄດ້ຮ່ວມອອກຄວາມຄິດຄວາມເຫັນບໍ່ໄດ້ໃຊ້ສິດຢ່າງມີອິສຣະພາບ ເພາະຢ້ານກົວການນາບຂູ່ທາງຕົງ ຫຼືທາງອ້ອມຈາກອິດທິພົນແລະອຳນາດເຖື່ອນຂອງຄົນກຸ່ມນ້ອຍໃນການປົກຄອງ.ການນຳພາແບບຜະເດັດການຊີ່ງປົກຄອງ ໂດຍພັກດຽວຫລື ຄົນກຸ່ມນ້ອຍໆ ຫລືການສືບຕໍ່ເຊື້ອສາຍ ທີ່ບໍ່ໄດ້ຖືກເລືອກຕັ້ງຈາກປະຊາຊົນແລະສະຖາປະນາຕົນເອງຂຶ້ນເປັນຜູ້ນຳ, ດັ່ງນັ້ນປະຊາຊົນຂອງບັນດາປະເທດຕ່າງໆຈຶ່ງໄດ້ໂຄ່ນລົ້ມຣະບອບດັ່ງກ່າວນີ້ຖີ້ມ.

ເພື່ອໃຫ້ປະເທດຊາດຂອງພວກເຮົາມີຄວາມຈະເຣີນຮຸ່ງເຮືອງກ້າວໜ້າ ການປົກຄອງປະເທດຕ້ອງ <u>ມາຈາກປະຊາຊົນ ໂດຍປະຊາຊົນແລະເພື່ອຜົນປະໂຍດອັນສູງສົ່ງຂອງປະຊາຊົນລາວ</u>.ດັ່ງນັ້ນ "ລາວຮ່ວມຊາດ "ຈຶ່ງ ໄດ້ເນັ້ນໜັກວ່າ ປະເທດລາວຕ້ອງເປັນ ***"ຣັດປະຊາທິປະໄຕ"*** ແບບລາວຢ່າງເສຣີ ໂດຍການຮັບປະກັນຕາມແນວທາງປະຊາທິປະໄຕ ມີ **"ຣັຖສະພາ"** ມີຜູ້ນຳພາ ຫຼື ປະມຸກປະເທດມາຈາກປະຊາຊົນ ໂດຍມີກຳນົດການນຳພາເປັນໄລຍະຕາມສະພາບການ ແລະຕາມຄວາມມຸ້ງມາດປາຖນາຂອງປະຊາຊົນລາວ. ສະນັ້ນ ເພື່ອໃຫ້ເໝາະສົມກັບສະພາບອັນແທ້ຈິງຂອງປະເທດຊາດອັນແສນຮັກແລະຫວງແຫນຂອງພວກເຮົາ ,ເພື່ອອະນາຄົດອັນແຈ່ມໃສແລະ ເພື່ອປົດປ່ອຍຄວາມທຸກຍາກອອກຈາກປະຊາຊົນລາວ, ຫຼັງຈາກມີຄວາມສາມະຄີປອງດອງເປັນເອກພາບກັນແລ້ວ, "ລາວຮ່ວມຊາດ "ສເນີໃຫ້ມີການອອກສຽງລົງປະຊາມະຕິຂອງປະຊາຊົນລາວ ເພື່ອເລືອກເອົາຣະບອບ<u>ການປົກຄອງລາວໃນອະນາຄົດ.</u>

ສຸດທ້າຍນີ້ ພວກເຮົາຈຶ່ງຖືເອົາຄວາມສຳຄັນວ່າປະເທດລາວນັ້ນເປັນຂອງຄົນລາວທັງໝົດທຸກຄົນ,ຖ້າພວກເຮົາຮ່ວມກັນສ້າງຄວາມສາມະຄີປອງດອງຊາດໄດ້ໄວຫຼາຍເທົ່າໃດ ໂອກາດທີ່ຈະກ້າວໄປສູ່ໄລຍະສ້າງສາພັທນາຊາດໃນດ້ານການປົກຄອງ,ການເສຖກິດແລະສັງຄົມ ກໍຍິ່ງໄວຂຶ້ນ ແລະເປັນໂອກາດທີ່ປະຊາຊົນລາວຈະໄດ້ຮັບຄວາມສຸຂກາຍສະບາຍໃຈແລະປະເທດຊາດກໍຈະຈະເຣີນຮຸ່ງເຮືອງ ⁒

ຂໍສະແດງ ຄວາມນັບຖື ຮັກແພງ ແລະ ປາຖນາດີ.

ປະທານ "ລາວຮ່ວມຊາດເພື່ອປະຊາທິປະໄຕ" : ດຣ ສົມບຸນ ທໍຣະນິນ .

---

**ຊື່ຜູ້ຮ່ວມງານ ຫລື ຜູ້ເຫັນພ້ອມນຳແນວທາງສ້າງຄວາມສາມະຄີ ທີ່ຈຳໜ່າຍເອກສານນີ້ :**

..........................................................................

ເພື່ອຜົນປະໂຍດອັນສູງສົ່ງຂອງປະເທດຊາດ ແລະ ຂອງປະຊາຊົນລາວ ,ພວກເຮົາ "ລາວຮ່ວມຊາດ" ຂໍ ຮ່ວມປຶກສາຫາລື ຮ່ວມແລກຄວາມຄິດຄວາມເຫັນ ຮ່ວມຈິດຮ່ວມໃຈແລະຮ່ວມມືນຳທຸກຝ່າຍ ແລະ ພີ່ນ້ອງລາວທຸກຖ້ວນໜ້າໂດຍບໍ່ຈຳແນກເຜົ່າພັນ ເຊື້ອຊົ້ນວັນນະແລະການເຊື່ອຖື ບໍ່ໄຈ້ແຍກຄົນຣະບອບເກົ່າຫລືຣະບອບໃຫມ່ ຢູ່ພາຍໃນແລະນອກປະເທດ ເພື່ອນາພ້ອມພຽງຮ່ວມກັນຊອກຫາເຫດແລະຫາຜົນ ເພື່ອເຮັດທຸກວິທີທາງ ໃຫ້ປະເທດຊາດອັນແສນຮັກ ແລະ ຫວງແຫນຂອງພວກເຮົາ ພົ້ນອອກຈາກຄວາມທຸກຍາກດ້ອຍພັດທະນາ ໃຫ້ປະຊາຊົນລາວໄດ້ຢູ່ດີກິນດີ ແລະມີຄວາມຫວັງອັນແຈ່ມໃສໃນອະນາຄົດ.

## PROGRAMME D'ACTIONS PACIFIQUES

### DE L'UNION NATIONALE POUR LA DÉMOCRATIE LAO (U.N.D.L)

### EN VUE DE L'ENTENTE ET LA CONCORDE NATIONALES

(1ère étape : à court terme)

- Compte tenu de l'évolution de la situation internationale, en particulier en Europe de l'Est où le régime totalitaire se désagrège et en Asie où les pays dirigés par le régime dictatorial tentent de rétablir une entente nationale après plusieurs années de conflit ;
- Vu la situation politique, économique et sociale aggravée du Laos où ses habitants ont sombré dans la misère , ainsi que les exactions et les arrestations arbitraires à l'encontre des étudiants , des enseignants et des patriotes qui réclament la liberté et la démocratie , et où le Parti unique gouverne le pays sans partage sous un régime dictatorial marxiste-léniniste, où les droits de l'homme sont violés et que les prisonniers d'opinion restent toujours incarcérés sans jugement et inhumainement traités ;
- Compte tenu des aspirations les plus profondes du peuple laotien aux libertés fondamentales, à la démocratie et à l'indépendance du pays ;

Conformément aux intérêts suprêmes de la nation , pour répondre aux aspirations légitimes les plus ardentes du peuple laotien et dans le cadre du mouvement mondial vers le progrès que l ' UNION NATIONALE POUR LA DEMOCRATIE LAO lance un appel solennel à tous les compatriotes de toutes les couches sociales , les personnalités patriotes, indépendamment de leur appartenance politique , les femmes et les hommes de bonne volonté , épris de paix et de justice , à l'intérieur et à l'extérieur du pays de **s'unir en une direction d'idée** sous la bannière de **l'Union nationale** afin de lutter héroïquement pour réaliser ce programme d'actions , en vue de rétablir l'entente et la concorde nationales et d'édifier un Laos souverain , libre , démocratique, indépendant et prospère.

Voici les grandes lignes :

1 – Accroître et resserrer les liens fraternels existants entre les Laotiens à l'intérieur et à l'extérieur du pays afin d'élever le **Patriotisme** et de protéger la valeur suprême de l'identité lao .

Multiplier les contacts avec des organisations nationales et internationales , des gouvernements , des femmes et des hommes de bonne volonté, épris de paix et de justice, pour leurs demander leur soutien afin de mettre en place les moyens et les possibilités d'entrer en rapport avec les représentants du gouvernement actuel du Laos et les responsables de l'opposition en vue de l'établissement d'un dialogue constructif qui contitue le meilleur moyen

de réaliser l'entente et la réconciliation nationales.
2 – Rétablir la réconciliation et la concorde nationales sur la base solide et permanente par l'organisation d'une « **table ronde** » réunissant les responsables de formations politiques à l'intérieur et à l'extérieur du pays afin de former un **« comité national de l'entente et de concorde nationales »** en vue de fixer les procédures pour reconstruire le Laos en Etat de droit . L'adhésion à l'idée que la croyance à une quelconque idéologie ne constitue pas pour autant un obstacle à la réconciliation et à l'entente nationales . La réconciliation implique une pluralité de vues et non une pensée unique .
3 – Créer des conditions favorables, conformément aux principes démocratiques et aux libertés fondamentales basées sur les droits de l'homme, permettant de réaliser préalablement à la mise en place **d'un gouvernement de coalition** . Afin d'éviter que l'activité étatique ne soit accaparée que par un seul Parti politique et gérée de façon arbitraire par la seule volonté de ce dernier, faire mettre en œuvre par ce gouvernement une politique d'indépendance, de démocratie, de neutralité et de paix afin de préparer et fixer un plan pour organiser **des élections générales libres au suffrage universel**, respectant le principe de **Multipartisme**, avec la participation de toutes les formations politiques à l'intérieur et à l'extérieur du Laos, sous le contrôle international .
4 – Edifier un régime politique véritablement démocratique et libre reflètant les aspirations les plus profondes du peuple lao et, pour l'intérêt de la nation , réviser la Constitution sur la base de garantie des libertés démocratiques en vue de bâtir le Laos en Etat libre, indépendant, souverain et démocratique,la faire adopter par le peuple au moyen d'un **Référendum.**

## Chers compatriotes ,

Nous sommes un peuple héroïque ayant des traditions d'union , serrons nos rangs sous le drapeau de **l'Union nationale** afin de concrétiser notre programme d'actions ; le temps est venu de réunir les compatriotes de tous bords et de reconstituer notre grande Famille laotienne . **Le Laos doit demeurer la patrie de tous les laotiens** y compris de ceux qui ont adopté la nationalité de leur pays d'accueil . Dans le contexte actuel, nous ne doutons pas d'une réponse positive de tous les laotiens de l'ancien et du nouveau régime à l'intérieur comme à l'extérieur du pays , à ce programme d'actions pacifiques .
En ce moment, un courant irrésistible pour la démocratie, les libertés fondamentales et les droits de l'homme déferle à travers le monde .
Unissons-nous et marchons avec confiance et courage vers la conquête du **Laos souverain et libre,** la concorde nationale et le bonheur du peuple lao.
L'intérêt de la nation doit passer en premier ; soutenez sans réserve notre programme pour le salut national et la prospérité de notre chère patrie .

Pour atteindre ces objectifs, nous avons besoin de votre coopération et de votre soutien dans tous les domaines à notre programme d'actions pacifiques . Merci .

Pour le Comité exécutif
Le Président de l'U.N.D.L.

Somboun THORANINTH

---

**U.N.D.L. 14 ALLÉE DU PERRUCHET A.389**
**94320 THIAIS (FRANCE)**
Tel : 01 48 92 55 44

**PHANNOUDEJ Cham**
Cité de la Joie
20, Allée des Bosquets
94420 LE PLESSIS TRÉVISE

08 Fev. 2004

## ຮຽນ ນາຍົງພີ່ນ້ອງລາວ ທີ່ນັບຖື

ເພື່ອຜົນປໂຍດອັນສູງສົ່ງຂອງລາວແລະເພື່ອຕອບສນອງຄວາມຮຽກຮ້ອງຕ້ອງການອັນແຮງກ້າຂອງພີ່ນ້ອງຜູ້ຮັກກຽດແລະສັກສີຂອງຄວາມເປັນລາວ .ກະຣຸນາເຜີຍແຜ່ແນວທາງສາມະຄີຊາດແບບ "ປາບໍ່ໃຫ້ຊ້ຳນ້ຳບໍ່ໃຫ້ຂຸ່ນ "ນີ້ໃຫ້ກວ້າງຂວາງແລະທົ່ວເຖິງດ້ວຍ. ຂໍໃຫ້ຖືວ່າເປັນແນວທາງຂອງພວກທ່ານເອງ. "ລາວຮ່ວມຊາດ "ຂໍຮ່ວມນຳທຸກຄົນເພື່ອປະຕິບັດຊຸກຍູ້ໃຫ້ເກີດຜົນເພື່ອອະນາຄົດຂອງຊາດລາວເຮົາ.

- ຖ້າທ່ານເຫັນວ່າແນວທາງນີ້ສອດຄ່ອງກັບສະພາບຕົວຈິງແລະ ຢາກຊຸກຍູ້ໃຫ້ມີປະສິດທິຜົນ .ກະຣຸນາ ຊ່ວຍໃບສມັບສນູນຢູ່ລຸ່ມນີ້ . ຂໍຂອບໃຈລ່ວງຫນ້າຢ່າງລົ້ນເຫລືອດ້ວຍ.

---

## ໃບ ສມັບສນູນ

ຊື່-ນາມສະກຸນ:.................................................ໂທຣ.......................

ບ່ອນຢູ່:...............................................................................................

ໄດ້ເຫັນພ້ອມນຳ ແນວທາງສ້າງຄວາມສາມັກຄີແບບສັນຕິວິທີ , ຈຶ່ງ ຂໍສນັບສນູນແລະຂໍສົມທົບ ໂດຍບໍ່ມີຂໍ້ຜູກມັດໃດໆ ຈຳນວນ : 20ເອີໂຣ ( ), ເພື່ອອູ້ມຊູການຕໍ່ສູ້ອັນຖືກຕ້ອງແລະເປັນທັມໃນການຍາດແຍ່ງເອົາຄວາມອິສຣະພາບ ສິດເສຣີພາບແລະສິດທິມະນຸດ ມາໃຫ້ປະຊາຊົນລາວໄດ້ຊົມໃຊ້,

<u>ຫມາຍເຫດ</u> **: ການຊວ່ຍອຸ້ມຊູພິເສດນັ້ນມີຫລາຍຮູບແບບ ຕາມຊອບໃຈແລະຕາມສັດທາແລ້ວແຕ່ຈະເຫັນໃຈ:**

+80 ເອີໂຣ( ) ເພື່ອຊ່ວຍຈອງວາຣະສານ "ລາວຮ່ວມຊາດ "ຣາຄາພິເສດສຳລັບ 5 ສະບັບກຳນົດນຶ່ງປີ (ຄ່າຈອງທັມດານຶ່ງສະບັບ 20 ເອີໂຣ ຕໍ່ນຶ່ງປີ) ເພື່ອ ເອົາໄປເຜີຍແຜ່ແຈກຢາຍໃຫ້ຜູ້ຮູ້ຈັກຮັກແພງ.

+40 ເອີໂຣ( ) ; 50ອ.( ) ;100ອ.( ) ; 200ອ.( ) ; ຂໍຊ່ວຍບາງຄັ້ງ ເພື່ອອູ້ມຊູ ດ້ວຍຄວາມຮັກຊາດ.

- ໃຫ້ຫມາຍກາກະບາດ×ໃສ່ບ່ອນ ( )ຕ້ອງການ ແລ້ວສົ່ງໄປສຳນັກງານຕາມບ່ອນຢູ່ລຸ່ມນີ້ ; ຖ້າເປັນ "ແຊັກ" ກະຣຸນາໃສ່ : U.N.D.L.

-ເຫັນວ່າຄ່າຝາກທາງການແພງສຳລັບປະເທດອື່ນຈະສົ່ງເປັນເງິນສົດໄປກໍໄດ້,ທ່ານຈະໄດ້ "ໃບຮັບເງິນ" ຕາມເວລາອັນຄວນ ຫລື ພ້ອມກັບວາຣະສານໃນສະບັບຕໍ່ໄປ.

"ລາວຮ່ວມຊາດ" ຈະຂໍຈາຣຶກຄຸນງາມຄວາມດີຂອງທ່ານໄວ້ໃນບັນຊີຜູ້ເປັນຮ່ວມນຳໂຊກຊະຕາອະນາຄົດຂອງຊາດແລະຜູ້ຮັກກຽດສັກສີຂອງຄວາມເປັນລາວ.

*ຈຶ່ງຂໍຂອບໃຈມາລ່ວງຫນ້າຢ່າງລົ້ນເຫລືອ .*

ວັນທີ.........................ລາຍເຊັນ :...............

**U.N.D.L. 14 ALLÉE DU PERRUCHET A.389**
**94320 THIAIS (FRANCE)**
**Tél. : 01 48 92 55 44**

**ລາວຮ່ວມຊາດ**

ເພື່ອປະຊາທິປະໄຕ

**UNION NATIONALE POUR LA DEMOCRATIE LAO**

**Adresse : U.N.D.L. 14 Allée du Perruchet A.389 – 94320 Thiais (France)**